## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 18 ກັນຍາ 2022 (09-18-2022)

---

## ຄວາມເຊື່ອສະແດງອອກໃນການກະທຳຂອງທ່ານ

*ແມ່ນໃຜແດ່ທີ່ທ່ານຊົມເຊີຍວ່າເຂົາເຮັດຕາມສິ່ງທີ່ເຂົາເທດ?*

**ຈຸດສຳຄັນໃນບົດຮຽນ**: ສິ່ງທີ່ທ່ານເຊື່ອກໍປາກົດແຈ້ງໃນສິ່ງທີ່ທ່ານເຮັດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ຄວາມເຊື່ອໃນອາເມຣິກາເຂັ້ມແຂງທ່າມກາງຊາວອາເມຣິກັນ. ການສຳຫຼວດນຶ່ງພົບວ່າ:

- ຫ້າສິບສາມສ່ວນຮ້ອຍຮູ້ຈັກພຣະເຈົ້າແລະບໍ່ສົງສັຍ.
- ສິບແປດສ່ວນຮ້ອຍເຊື່ອພຣະເຈົ້າແຕ່ຍັງສົງສັຍ.
- ສີ່ສ່ວນຮ້ອຍເຊື່ອພຣະເຈົ້າບາງເວລາ.

ຜົນສຳຫຼວດແຫ່ງນຶ່ງໄດ້ພົບວ່າຫຼາຍກວ່າຫົກສິບແປດສ່ວນຮ້ອຍຂອງຊາວອາເມຣິກັນບອກວ່າເປັນຄຣິສະຕຽນ. ທ່ານອາດຄິດວ່າ, ມີຄົນສ່ວນຫຼາຍເຊື່ອໃນພຣະເຈົ້າ, ແລະມີຄົນຈຳນວນຂ້ອນຂ້າງຫຼາຍທີ່ອ້າງຕົວເອງວ່າເຊື່ອໃນພຣະຄຣິດ, ມາຕຖານດ້ານຈັນຍາບັນແລະສິລທັມຂອງຊາວອາເມຣິກັນຄວນສູງກວ່ານີ້. ແຕ່ໜ້າເສັ້ຽດາຍ, ນັ້ນບໍ່ແມ່ນໃນກໍລະນີນີ້. ບາງຄົນຕິບັນຫາທາງດ້ານຈັນຍາບັນແລະສິລທັມ, ຕິພັກການເມືອງຝ່າຍກົງກັນຂ້າມ, ຕິຂ່າວສານມວນຊົນ, ຫຼື ໂທຣະທັດ, ແຕ່ ຄວາມຮັບຜິດຊອບຕົກມາໃສ່ເຮົາແຕ່ລະຄົນ. ຖ້າຫົກສິບແປດສ່ວນຮ້ອຍຂອງພວກເຮົາອ້າງວ່າເປັນຄຣິສະຕຽນ, ແລ້ວສິລທັມຂອງເຮົາຢູ່ໃສ?

ບັນຫາບໍ່ແມ່ນຢູ່ກັບສິ່ງທີ່ຄົນເຊື່ອ; ບັນຫາຢູ່ທີ່ເຂົາບໍ່ໄດ້ດຳເນີນຊີວິດຕາມສິ່ງທີ່ເຂົາເຊື່ອ. ພວກເຮົາສະແດງການບໍ່ເຊື່ອມຕໍ່ກັນລະຫວ່າງລະບົບຄວາມເຊື່ອແລະການປະຕິບັດຂອງເຮົາ. ສິ່ງທີ່ເຮົາເຮັດບໍ່ສອດຄ່ອງກັບຄວາມເຊື່ອຂອງເຮົາ. ໃນພຣະທັມຢາໂກໂບ, ຊີ້ໃຫ້ເຮົາເຫັນທາງທີ່ດີກວ່າ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, 3, )

### ການສຶກສາພຣະຄັມພີ

**1. <u>ຢາໂກໂບ 2:14-17</u>.**

*14 ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຖ້າຜູ້ໃດຈະເວົ້າວ່າຕົນມີຄວາມເຊື່ອ ແຕ່ບໍ່ມີການປະຕິບັດ ຈະໄດ້ປໂຍດອັນໃດ ຄວາມເຊື່ອນັ້ນ
ອາດຈະໃຫ້ຕົນພົ້ນໄດ້ຫລື. 15 ຖ້າພີ່ນ້ອງຊາຍຍິງຄົນໃດບໍ່ມີເຄື່ອງນຸ່ງຫົ່ມແລະຂາດເຂີນອາຫານປະຈຳວັນ. 16 ແລະມີຄົນໃດໃນພວກເຈົ້າ
ເວົ້າແກ່ເຂົາວ່າ, "ຈົ່ງໄປເປັນສຸກເຖີ້ນ, ຂໍໃຫ້ອົບອຸ່ນແລະກິນອີ່ມແຕ່ບໍ່ໄດ້ໃຫ້ສິ່ງຂອງທີ່ເຂົາຕ້ອງການສຳລັບຕົວນັ້ນ ຈະເປັນປໂຍດອັນ-
ໃດ. 17 ດັ່ງນັ້ນແຫລະ, ຄວາມເຊື່ອກໍຢ່າງດຽວກັນ ຖ້າບໍ່ມີການປະຕິບັດກໍຕາຍແລ້ວ.*

ດັ່ງພຣະຄັມພີທີ່ພວກເຮົາໄດ້ຮຽນມາໃນບົດຮຽນຄັ້ງກ່ອນ (ຢາໂກໂບ 2:13), ທ່ານຢາໂກໂບໃຊ້ຄວາມແຕກຕ່າງທາງດ້ານເສຖກິດສັງຄົມໃນສມັຍຂອງເພິ່ນ ເພື່ອເນັ້ນຄວາມສຳຄັນກ່ຽວກັບຄວາມເຊື່ອທີ່ມີການປະຕິບັດ. ເພິ່ນໄດ້ໃຫ້ຕົວຢ່າງ "ພີ່ນ້ອງຊາຍຍິງ" ຄົນໃດບໍ່ມີເຄື່ອງນຸ່ງຫົ່ມແລະຂາດອາຫານປະຈຳວັນ. ຖ້າມີຄົນໃດພຽງເວົ້າວ່າຈົ່ງໄປເປັນສຸກເຖີ້ນເທົ່ານັ້ນກໍແປວ່າບໍ່ໄດ້ໃຫ້ຫຍັງເລີຍ. ນີ້ແມ່ນຄົນທີ່ຕ້ອງການຄວາມຊ່ອຍເຫຼືອຫຼາຍຢ່າງ, ແຕ່ສິ່ງທີ່ລາວໄດ້ຮັບມີແຕ່ຄຳອອຍໃຈວ່າ "ຈົ່ງໄປເປັນສຸກ, ອົບອຸ່ນ, ແລະອີ່ມທ້ອງເຮັດໃຫ້ຄົນນຶ່ງຄົນໃດກິນອີ່ມນຸ່ງອຸ່ນໄດ້ດອກ. ລາວຕ້ອງການອາຫານແລະເຄື່ອງນຸ່ງຫົ່ມພຸ້ນ! ບໍ່ແມ່ນຄຳຊູໃຈຊື່ໆ.

ບາງທີທ່ານອາດຢືນຢູ່ໃນຫ້ອງເກັບເຄື່ອງທີ່ເຕັມໄປດ້ວຍເຄື່ອງນຸ່ງແລະເວົ້າວ່າ, "ຂ້ອຍບໍ່ມີເຄື່ອງນຸ່ງ." ໃນຍຸກສມັຍໃໝ່ໝາຍຄວາມ

ວ່າ "ຂ້ອຍບໍ່ສາມາດຫາເຄື່ອງນຸ່ງທີ່ເໝາະສຳລັບງານຫຼືສີທີ່ຖືກຕ້ອງ ຫຼືເຄື່ອງທີ່ຂ້ອຍມັກນຸ່ງ." ທ່ານຢາໂກໂບກ່າວເຖິງພີ່ນ້ອງຄຣິສະຕຽນວ່າ "ຂາດເຄື່ອງນຸ່ງຫົ່ມ," ເພິ່ນບໍ່ໄດ້ໝາຍເຖິງວ່າລາວບໍ່ມີເຄື່ອງນຸ່ງຈົບງານຫຼືເຄື່ອງນຸ່ງເໝາະສົມສຳລັບໂອກາດຕ່າງໆ. ລາວຂາດເຂີນເຄື່ອງນຸ່ງຫົ່ມ-ແທ້ໆ! ພີ່ນ້ອງເຫຼົ່ານີ້ອາດເປືອຍກາຍຢູ່ ຫຼືນຸ່ງຜ້າຂາດຫຼຸ້ງນກໍເປັນໄດ້. ລາວຕົກຢູ່ໃນສະພາບທີ່ອັບຈົນ ແລະຂາດເຂີນຢ່າງຮ້າຍແຮງແທ້ຈິງ.

ບຸກຄົນດັ່ງກ່າວບໍ່ພຽງແຕ່ເປືອຍກາຍເທົ່ານັ້ນລາວທັງຫິວເຂົ້າອີກ. ອີກເທື່ອນຶ່ງ, ໃນຕົວຢ່າງຂອງທ່ານຢາໂກໂບຄົນອຶດຫິວບໍ່ແມ່ນຂາດຂອງກິນດີ, ຂອງກິນທີ່ໃຫ້ສຸຂພາບດີ, ຫຼືຂອງກິນແຊບ ຫຼື ແມ້ກະທັ້ງຂອງກິນທີ່ລາວມັກໃນຂນະນັ້ນ. ພີ່ນ້ອງທີ່ເຊື່ອຄົນນີ້ບໍ່ມີຫຍັງກິນຈັກດີ້ເລີຍ.

*ຄວາມເຊື່ອທີ່ໃຊ້ການບໍ່ໄດ້ເປັນແບບໃດ?*

ທ່ານຢາໂກໂບໄດ້ຂຽນເຖິງຜູ້ເຊື່ອຊາວຢິວ (ຢກບ 1:1-2) ຊຶ່ງຖືທຳນຽມການຕ້ອນຮັບຢ່າງເຄັ່ງຂັດ. ຄົນຢິວໄດ້ຮັບການສັ່ງວ່າບໍ່ໃຫ້ຫັນຫຼັງໃຫ້ຄົນແປກໜ້າທີ່ມີຄວາມຂັດສົນ(ເລວີ19:34), ພີ່ນ້ອງຊາຍຍິງ. ຕາມທຳນຽມແລ້ວ, ເຂົາຄາດຫວັງໄດ້ຮັບການຊ່ອຍເຫຼືອ. ແຕ່, ໃນຕົວຢ່າງຂອງທ່ານຢາໂກໂບ, ບໍ່ມີໃຫ້ການຊ່ອຍເຫຼືອ-ມີແຕ່ຄວາມເຄັ່ງຄັດທາງສາສນາແລະຄຳເວົ້າທີ່ບໍ່ມີປໂຍດ. ບໍ່ພຽງແຕ່ຄຳເວົ້າເຫຼົ່ານີ້ບໍ່ມີປໂຍດເທົ່ານັ້ນ, ຍັງເປັນຄຳໝິ່ນປມາດແລະຫງໍ້ຫງັນອີກດ້ວຍ.

ທ່ານຢາໂກໂບໄດ້ເຊື່ອມຕໍ່ສິ່ງນີ້ກັບຄວາມເຊື່ອ."ດັ່ງນັ້ນແຫຼະ, ຄວາມເຊື່ອກໍຢ່າງດຽວກັນ ຖ້າບໍ່ມີການປະຕິບັດກໍຕາຍແລ້ວ" (ຂໍ້17).

ຄົນຕ້ອງເຫັນຄວາມເຊື່ອຂອງເຮົາດ້ວຍການປະຕິບັດ; ບໍ່ດັ່ງນັ້ນ-ຄວາມເຊື່ອ ແລະການວາງໃຈຂອງເຮົາ-ກໍຕາຍແລ້ວ. ຄວາມເຊື່ອທີ່ບໍ່ມີການປະຕິບັດບໍ່ພຽງແຕ່ບໍ່ເຮັດການດີເທົ່ານັ້ນ; ມັນຍັງເຮັດໃຫ້ສະຖານະການຕົກຕ່ຳລົງຕື່ມອີກ. ໃນຕົວຢ່າງຂອງທ່ານຢາໂກໂບພີ່ນ້ອງທີ່ຂາດອາຫານແລະເຄື່ອງນຸ່ງອາດອອກຈາກໂບດໄປຕັ້ງແຕ່ຕອນເຂົ້າມາພຸ້ນແລ້ວ, ເພາະຍັງບໍ່ມີອາຫານແລະເຄື່ອງນຸ່ງຫົ່ມຄືເກົ່າ. ແທນທີ່ຈະໄດ້ຮັບຄວາມອົບອຸ່ນທີ່ລາວຕ້ອງການ, ລາວກັບຮູ້ສຶກໜາວເພາະຖືກສາຍລົມໜາວຈັດພັດຈົນສະບັ້ນ. ຂນະທີ່ລາວອອກໄປນັ້ນ ສິ່ງດຽວທີ່ລາວໄດ້ຮັບຄືຄວາມຮູ້ສຶກອິ່ມແຮງວ່າ ພີ່ນ້ອງທີ່ລາວຖືເປັນພີ່ເປັນນ້ອງນັ້ນເປັນຄົນແລ້ງຄວາມຮັກ, ແລະແລ້ງຄວາມເຊື່ອ. ດັ່ງທີ່ທ່ານໂຢຮັນກ່າວໄວ້ວ່າ *"ແຕ່ຖ້າຜູ້ໃດມີຊັບສົມບັດໃນໂລກນີ້ ແລະເຫັນພີ່ນ້ອງຂອງຕົນຂັດສົນ ແລ້ວຍັງບໍ່ຍອມມີໃຈເມດຕາຊ່ອຍເຫລືອຜູ້ນັ້ນ ຄວາມຮັກຕໍ່ພຣະເຈົ້າຈະດຳລົງຢູ່ໃນຕົນໄດ້ຢ່າງໃດ" (1 ໂຢຮັນ 3:17).*

## 2. <u>ຢາໂກໂບ 2:18-20</u>.

*[18]ແຕ່ບາງຄົນຈະກ່າວວ່າ, "ຝ່າຍເຈົ້າ, ເຈົ້າມີຄວາມເຊື່ອ ແຕ່ຝ່າຍຂ້ອຍມີການປະຕິບັດ" ຈົ່ງສະແດງໃຫ້ເຮົາເຫັນວ່າ ຄວາມເຊື່ອຂອງເຈົ້າຊຶ່ງບໍ່ມີການປະຕິບັດ ແລະຝ່າຍເຮົາຈະສະແດງໃຫ້ເຈົ້າເຫັນຄວາມເຊື່ອຂອງເຮົາດ້ວຍການປະຕິບັດຂອງເຮົານັ້ນ.[19]ຝ່າຍພວກເຈົ້າກໍເຊື່ອຕື້ວ່າມີພຣະເຈົ້າແຕ່ອົງດຽວນັ້ນກໍດີຢູ່ແລ້ວ ສ່ວນຜີຮ້າຍກໍເຊື່ອເໝືອນກັນແລະຢ້ານຈົນຕົວສັ່ນ. [20]ໂອ ຄົນໂງ່ເຮີຍ, ເຈົ້າຢາກຮຽນຮູ້ຫລືວ່າ ຄວາມເຊື່ອທີ່ບໍ່ມີການປະຕິບັດນັ້ນກໍໄຮ້ຜົນ.*

ຖານະຜູ້ເຊື່ອ ພວກເຮົາມີຄວາມເຊື່ອ, ຄວາມຈິງ, ແລະຫຼັກຄວາມເຊື່ອເປັນສິ່ງສຳຄັນຕໍ່ເຮົາ. ແຕ່ຖ້າທ່ານຢາກຮູ້ວ່າຄວາມເຊື່ອມີຄ່າຕໍ່ຄົນຜູ້ນຶ່ງແທ້ຈິງພຽງໃດນັ້ນ, ໃຫ້ພິຈາຣະນາເບິ່ງຜົນຂອງຄວາມເຊື່ອເຫຼົ່ານັ້ນເບິ່ງວ່າມີຜົນສະທ້ອນຢ່າງໃດ ຫຼືເຫັນໄດ້ວ່າລາວດຳເນີນຊີວິດຢ່າງໃດ. ມັນເປັນການຍາກທີ່ຈະໃຫ້ຄວາມເຊື່ອຖືແກ່ຜູ້ໃດຜູ້ນຶ່ງ ຖ້າຫາກການກະທຳຂອງລາວກົງກັນຂ້າມກັບຄຳເວົ້າຂອງລາວ. ຫຼັກຖານທີ່ແທ້ຈິງເຫັນໄດ້ຈາກສິ່ງທີ່ເຮົາກະທຳ, ບໍ່ພຽງແຕ່ສິ່ງທີ່ເຮົາເວົ້າ.

1. ເມື່ອສະມາຊິກຝ່າຍນິຍົມ-ຊີວິດຜູ້ນຶ່ງໃນສະພາຄອນກແຣສ ຖືກພົບວ່າເມັຽລັບຂອງລາວອາດຈະຕັ້ງຄັນ, ລາວໄດ້ບອກໃຫ້ນາງທຳແທ້ງ. ເມື່ອຂ່າວໄດ້ຮົ່ວໄຫຼ, ລາວກໍຕ້ອງໄດ້ລາອອກຈາກໜ້າທີ່.

2. ມີຄົນນຶ່ງທີ່ອາສັຍຢູ່ສຕ໊ອກໂຮມໄດ້ຍື່ນຄຳຟ້ອງຕໍ່ຕຳລວດ ກ່ຽວກັບມີຄົນຂັບຣົດໄວຜ່ານຄຸ້ມຂອງລາວ. ໃນມື້ຕໍ່ມາເຂົາໄດ້ຕິດຕັ້ງຣະບົບຄວບຄຸມການຈາຣະຈອນໃນຄຸ້ມນັ້ນ. ນຶ່ງໃນບັນດາຜູ້ທີ່ໄດ້ໃບແຈ້ງຍ້ອນຂັບຣົດເກີນຄວາມໄວຈຳກັດກໍແມ່ນຜູ້ທີ່ຍື່ນຄຳຟ້ອງນັ້ນ.

ແມ່ນກະທັ້ງໂລກກໍເຫັນວ່າຕ້ອງມີຄວາມກົມກຽວຣະຫວ່າງສິ່ງທີ່ເຮົາເຊື່ອແລະສິ່ງທີ່ເຮົາກະທຳ. ຄົນຕ້ອງເຫັນຄວາມກົມກຽວນັ້ນໂດຍສະເພາະເຣື່ອງຄວາມເຊື່ອ. ພວກເຮົາບໍ່ຄວນມີຂໍ້ບສົມບັດສິ່ງໃດເໜືອກວ່າຄວາມສັມພັນກັບພຣະຄຣິດໂດຍຄວາມເຊື່ອ, ແລະຄວາມສັມພັນທາງຄວາມເຊື່ອນັ້ນຕ້ອງປາກົດແຈ້ງໃນການດຳເນີນຊີວິດຂອງເຮົາ. ຄວາມເຊື່ອແທ້ແລະການກະທຳຈິງຈະແຍກຈາກກັນບໍ່ໄດ້.

ເໝືອນດັ່ງຊາວອາເມຣິກັນສ່ວນຫຼາຍໃນຍຸກຂອງເຮົາ, ພວກຜູ້ຊົມເບື້ອງຕົ້ນຂອງທ່ານຢາໂກໂບກໍໄດ້ເຊື່ອໃນພຣະເຈົ້າ. ທ່ານຢາໂກໂບບໍ່ໄດ້ເຊື່ອມຕໍ່ຫຼັກທິສດີສາສນາຂອງເຂົາ; ຄວາມເປັນຈິງ, ເພິ່ນຍົກຍ້ອງເຂົາໃນການເຊື່ອໃນພຣະເຈົ້າ. ສຳລັບຜູ້ເຊື່ອຊາວຢິວເຫຼົ່ານີ້, ເຊື່ອໃນພຣະເຈົ້າອົງທ່ຽງແທ້ເປັນສິ່ງຈຳເປັນ. ພຽງແຕ່ຄິດຖືກຕ້ອງກ່ຽວກັບພຣະເຈົ້າ, ເຖິງຢ່າງໃດກໍຕາມ, ຍັງບໍ່ພຽງພໍ. ທ່ານຢາໂກໂບເນັ້ນວ່າ *"ສ່ວນຜີຮ້າຍກໍເຊື່ອເໝືອນກັນແລະຢ້ານຈົນຕົວສັ່ນ" (ຂໍ້19)* ໃນດ້ານຄວາມຄິດ, ສ່ວນຄວາມເຊື່ອຂອງເຂົາບໍ່ໄດ້ປ່ຽນເຂົາເລີຍ. ພວກເຂົາຍັງເປັນຜີຮ້າຍຢູ່-ຄວາມເຊື່ອຂອງເຂົາບໍ່ໄດ້ຊ່ອຍໃຫ້ເຂົາພົ້ນແລະເຂົາກໍຮູ້ຢ່າງເຕັມປ່ຽມແລ້ວວ່າເຂົາຈະໄດ້ພົບກັບຄວາມພິນາດແນ່ນອນ (ມັດທາຍ 8:29).

ຄວາມເຊື່ອທີ່ແທ້ຈິງອາດຈະເລີ້ມຕົ້ນດ້ວຍທິສດີສາສນາສາດທີ່ດີ, ແຕ່ມັນຈະບໍ່ສິ້ນສຸດຢູ່ທີ່ນັ້ນ. ຄວາມເຊື່ອຂອງບາງຄົນປະກອບດ້ວຍການຕົກລົງເຫັນດີກັບຄວາມເຊື່ອບາງຢ່າງ, ຫຼືຮ້າຍແຮງກວ່ານັ້ນ, ເວົ້າງ່າຍໆວ່າເຂົາເຈົ້າເຫັນດີກັບຄວາມເຊື່ອບາງຢ່າງ. ນັ້ນແມ່ນແຕກຕ່າງກັນຢ່າງຫຼວງຫຼາຍຈາກການມີຄວາມສຳຄັນ, ຊີວິດ-ປ່ຽນແປງໃນສາຍສັມພັນກັບພຣະເຈົ້າ. ມັນແມ່ນຢ່າງນຶ່ງທີ່ເວົ້າກ່ຽວກັບພຣະເຈົ້າແລະມັນກໍອີກຢ່າງນຶ່ງທີ່ຈະເຊື່ອຟັງພຣະເຈົ້າຢ່າງຕາຍໃຈໂດຍການເອົາຄວາມເຊື່ອນັ້ນໄປປະຕິບັດໃຊ້.

*ຄວາມເຊື່ອມີຄວາມໝາຍຫຼາຍກວ່າຄຳເວົ້າວ່າເຮົາເຊື່ອພຽງຢ່າງດຽວແນວໃດ?*

3. **<u>ຢາໂກໂບ 2:21-26</u>.**

*21 ເມື່ອອັບຣາຮາມບັນພະບຸຣຸດຂອງພວກເຮົາ ໄດ້ນຳເອົາອີຊາກບຸດຂອງຕົນມາຖວາຍເທິງແທ່ນບູຊາ ກໍໄດ້ຊົງຖືວ່າຊອບທັມເພາະການ
ປະຕິບັດ ບໍ່ແມ່ນຫລື. 22 ພວກເຈົ້າກໍເຫັນແລ້ວວ່າ ຄວາມເຊື່ອຂອງອັບຣາຮາມກໍຮ່ວມກັນກັບການປະຕິບັດຂອງຕົນ ແລະດ້ວຍການປະ
ຕິບັດນັ້ນແຫລະ, ຄວາມເຊື່ອຈຶ່ງໄດ້ເຖິງທີ່ສຳເຣັດ. 23 ແລະພຣະຄັມພີກໍສຳເຣັດທີ່ກ່າວວ່າ, "ອັບຣາຮາມໄດ້ເຊື່ອພຣະເຈົ້າ ແລະ ພຣະ-
ອົງຊົງຖືວ່າຄວາມເຊື່ອນັ້ນເປັນຄວາມຊອບທັມແກ່ທ່ານ" ແລະພຣະເຈົ້າຊົງເອີ້ນເພິ່ນວ່າ "ສະຫາຍຂອງເຮົາ." 24 ເຈົ້າທັງຫລາຍກໍເຫັນ
ແລ້ວວ່າຜູ້ໃດຈະໄດ້ຊົງຖືວ່າຊອບທັມ ກໍເນື່ອງດ້ວຍການປະຕິບັດແລະບໍ່ແມ່ນດ້ວຍຄວາມເຊື່ອພຽງຢ່າງດຽວ. 25 ໃນທຳນອງດຽວກັນນາງ
ຣາຮາບຍິງໂສເພນີໄດ້ຮັບຕ້ອນຜູ້ສົ່ງຂ່າວ ແລ້ວໃຫ້ເຂົາກັບເມືອເສັ້ນທາງອື່ນ ກໍໄດ້ຊົງຖືວ່າຊອບທັມເນື່ອງດ້ວຍການປະຕິບັດ ບໍ່ແມ່ນ
ຫລື. 26 ເຫດວ່າຮ່າງກາຍທີ່ບໍ່ມີຈິດວິນຍານກໍຕາຍແລ້ວສັນໃດ ຄວາມເຊື່ອທີ່ບໍ່ມີການປະຕິບັດກໍຕາຍແລ້ວສັນນັ້ນເໝືອນກັນ.*

ເພັ່ງເບິ່ງຄັ້ງແລກ, ທ່ານຢາໂກໂບຖາມວ່າ-ອັບບຣາຮາມພໍ່ເຖົ້າຂອງເຮົາກໍບໍ່ຖືກຕັດສິນວ່າເປັນຄົນຊອບທັມເພາະການງານທີ່ໄດ້ຖວາຍອີຊາກເທິງແທ່ນບູຊານັ້ນຫຼື?-ເໝືອນກັບວ່າກົງກັນຂ້າມກັບຄຳສອນຂອງທ່ານໂປໂລວ່າ ຄວາມພົ້ນມາຈາກຄວາມເຊື່ອ, *"ດ້ວຍວ່າພວກ-ເຮົາເຫັນວ່າຄົນນຶ່ງຄົນໃດຈະຊົງຖືວ່າຊອບທັມໄດ້ ກໍໂດຍອາສັຍຄວາມເຊື່ອ ນອກຈາກການປະຕິບັດຕາມພຣະບັນຍັດ" (ໂຣມ 3:28).*

*ມີອຸປສັກອັນໃດແດ່ທີ່ຈະດຳເນີນຊີວິດໃນຄວາມເຊື່ອ?*

ມັນມີຄວາມສຳຄັນທີ່ທ່ານຢາໂກໂບໄດ້ອ້າງເຖິງອັບຣາຮາມ, ຜູ້ຊຶ່ງຊາວຢິວເຊື່ອຖືວ່າເປັນບິດາແຫ່ງຄວາມເຊື່ອ. ເຖິງຢ່າງໃດກໍຕາມການໂຕ້ຖຽງຂອງເພິ່ນໄດ້ທັນກຽວເຂົ້າໃນເວລາທີ່ເພິ່ນສະແດງໃຫ້ເຫັນແນວຄວາມຄິດນີ້ໂດຍການອ້າງເຖິງຄວາມເຊື່ອຂອງຍິງໂສເພນີຄົນຕ່າງດ້າວ. ນາງຣາຮາບເຊື່ອສິ່ງທີ່ນາງໄດ້ຍິນກ່ຽວກັບພຣະເຈົ້າຂອງຊາວອິສຣາເອນ, ແລະນາງໄດ້ເລືອກເຊື່ອພຣະອົງເປັນພຣະເຈົ້າ (ໂຢຊວຍ 2:8-11).

ບໍ່ມີແຍກຫ່າງຈາກກັນຣະຫວ່າງຫຼັກຄໍາສອນຂອງທ່ານໂປໂລແລະຢາໂກໂບ. ທ່ານໂປໂລຂຽນວ່າຄວາມພົ້ນມີມາໂດຍທາງພຣະຄຸນຂອງພຣະເຈົ້າໂດຍທາງຄວາມເຊື່ອ(ເອເຟໂຊ 2:8-9), ແຕ່ ເພິ່ນໄດ້ຂຽນເໝືອນກັນວ່າຈຸດປະສົງຄວາມພົ້ນຂອງເຮົາແມ່ນເພື່ອໃຫ້ພວກເຮົາປະກອບການດີ ຊຶ່ງພຣະເຈົ້າໄດ້ຈັດຕຽມລ່ວງໜ້າໄວ້ກ່ອນ ເພື່ອໃຫ້ເຮົາທັງຫຼາຍປະຕິບັດຕາມ (ເອເຟໂຊ 2:10). ການດີແມ່ນຜົນຕົ້ນຕໍຂອງຄວາມເຊື່ອແທ້ຈິງ.

ທ່ານຢາໂກໂບບໍ່ໄດ້ສອນວ່າການງານໂດຍປະຈາກຄວາມເຊື່ອພົ້ນໄດ້. ການງານແລະຄວາມເຊື່ອເປັນແນວຄິດເສີມກັນ. ຄວາມເຊື່ອບັນດົນໃຫ້ທຳງານ ແລະ ງານນັ້ນເຮັດໃຫ້ຄວາມເຊື່ອສຳເຣັດ.*"ພວກເຈົ້າກໍເຫັນແລ້ວວ່າ ຄວາມເຊື່ອຂອງອັບຣາຮາມກໍຮ່ວມກັນກັບການປະຕິບັດຂອງຕົນ ແລະດ້ວຍການປະຕິບັດນັ້ນແຫລະ, ຄວາມເຊື່ອຈຶ່ງໄດ້ເຖິງທີ່ສຳເຣັດ (ຢກບ 2:22).*

<u>ການງານດີຕ່າງໆບໍ່ແມ່ນສິ່ງທີ່ເຮົາເຮັດເພື່ອໃຫ້ເຖິງຄວາມພົ້ນ; ມັນແມ່ນສິ່ງທີ່ເຮົາເຮັດເພາະຍ້ອນຄວາມພົ້ນ.</u> ຊີວິດຕ້ອງການຫຼາຍກວ່າຄໍາເວົ້າ; ມັນ ຕ້ອງການ ການກະທຳ. ຄວາມເຊື່ອທີ່ເຜົາໄໝ້ໃນວິນຍານແລະດົນໃຈທ່ານໃຫ້ລົງມື ບໍ່ພຽງແຕ່ໂຜດທ່ານໃຫ້ພົ້ນແຕ່ຍັງດົນບັນດານໃຫ້ທ່ານເປັນສ່ວນນຶ່ງໃນພັນທະກິດການໄຖ່ຂອງພຣະເຈົ້າອີກດ້ວຍ.

*ມີທາງໃດແດ່ທີ່ກຸ່ມຂອງເຮົາສາມາດເປັນແບບຢ່າງຄວາມເຊື່ອທີ່ມີການປະຕິບັດ?*

## ນຳໃຊ້ໃນຊີວິດ

ຊີວິດຂອງທ່ານມີຄວາມຈິງແນວໃດວ່າ ສິ່ງທີ່ທ່ານເຊື່ອກໍປາກົດແຈ້ງໃນສິ່ງທີ່ທ່ານເຮັດ? ຈົ່ງເລືອກການນຳໃຊ້ໃນຊີວິດຂໍ້ໃດຂໍ້ນຶ່ງຕໍ່ໄປນີ້:

- **ອ່ານແລະອະທິຖານ:** ອ່ານເພງສັຣເສີນ 139:23-24: "ຂ້າແດ່ພຣະເຈົ້າ ຂໍພຣະອົງຊົງກວດເບິ່ງຂ້າພຣະອົງ ແລະຮູ້ເຖິງຈິດໃຈຂອງຂ້າພຣະອົງ ຂໍພຣະອົງຊົງທົດສອບເບິ່ງຂ້າພຣະອົງ ແລະເປີດເຜີຍຄວາມນຶກຄິດທັງຫລາຍຂອງຂ້າພຣະອົງ. ຂໍພຣະອົງຊົງທອດພຣະເນດເບິ່ງວ່າ ຂ້າພຣະອົງມີຫຍັງແດ່ທີ່ເຮັດໃຫ້ພຣະອົງຊົງລຳບາກພຣະທັຍ ແລະຂໍຊົງນຳໜ້າຂ້າພຣະອົງໄປສູ່ເສັ້ນທາງອັນຄົງຢູ່ຕລອດໄປ." ຈົ່ງອະທິຖານ, ອ້ອນວອນພຣະຂໍພຣະອົງເປີດເຜີຍ ສ່ວນໃດໃນຊີວິດຂອງທ່ານທີ່ທ່ານບໍ່ໄດ້ດຳເນີນຊີວິດສົມກັບທີ່ທ່ານບອກວ່າເຊື່ອ. ຫຼັງຈາກການອະທິຖານ, ພັທນາແຜນການປະຕິບັດສຳລັບການປ່ຽນແປງຊີວິດທີ່ຈະຊ່ວຍໃຫ້ການກະທຳຂອງທ່ານກັບຄວາມເຊື່ອຂອງທ່ານຕົງກັນ.
- **ຂຽນ:** ຈົ່ງຈົດບັນທຶກ "ບັນທຶກ-ຄວາມເຊື່ອ-ທີ່ມີການປະຕິບັດ" ຢ່າງໜ້ອຍຄວາມເຊື່ອຫຼັກໆຫ້າຢ່າງ. ຕລອດອາທິດໜ້າ, ຈົ່ງຂຽນວິທີທາງທີ່ການກະທຳຂອງທ່ານສະແດງ (ຫຼືບໍ່ສະແດງ) ວ່າທ່ານໄດ້ນຳໃຊ້ຄວາມເຊື່ອເຫຼົ່ານັ້ນໃນຊີວິດຂອງທ່ານ.
- **ສົນທະນາ.** ຈົ່ງຖາມເພື່ອນຜູ້ທີ່ທ່ານເຊື່ອໃຈ ໃຫ້ເວົ້າເຣື່ອງຊີວິດຂອງທ່ານແລະບອກທ່ານວ່າທ່ານໃຊ້ຊີວິດສອດຄ່ອງກັບຄວາມເຊື່ອແນວໃດ. <u>ຈົ່ງຟັງ.</u> <u>ຈົ່ງຫຼີກເວັ້ນການປ້ອງກັນຕົວເອງ</u>. <u>ຕຽມພ້ອມປ່ຽນແປງຊີວິດໂດຍອີງໃສ່ສິ່ງທີ່ທ່ານໄດ້ຍິນ</u>.

ມີຄົນຫຼວງຫຼາຍເວົ້າວ່າເຂົາເຊື່ອ. ແຕ່ມີຈັກຄົນທີ່ໜູນຫຼັງຄວາມເຊື່ອດ້ວຍການກະທຳທີ່ຊອບທັມ? ຈົ່ງໃຫ້ແນ່ໃຈວ່າບໍ່ມີການຂາດຕົກບົກຜ່ອງໃນຊີວິດຂອງພວກເຮົາ; ພວກເຮົາຕ້ອງເປັນຄົນເຊື່ອແທ້. ແລະຄວາມເຊື່ອແທ້ທີ່ມີການປະຕິບັດ!

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**